ສຳນັກງານໃຫຍ່

ເລກທີ: 044/ທຄຕລ.ສພບ.2026
ນະຄອນຫຼວງວຽງຈັນ, ວັນທີ: 06 ສິງ.2026

ມະຕິ

ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ

ຄັ້ງທີ 03 ປະຈຳປີ 2026, ວັນທີ 06/08/2026

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ຄັ້ງທີ 03 ປະຈຳປີ 2026 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:30-15:45 ໂມງ ຂອງວັນທີ 06/08/2026 ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈຸມຄຳ ປະທານສະພາບໍລິຫານຂອງ ທຄຕລ. ມີສະມາຊິກສະພາບໍລິຫານຈຳນວນ 07 ທ່ານ ເຂົ້າຮ່ວມ (ໃນນີ້ ມີກຳມະການສະພາບໍລິຫານຈຳນວນ 01 ທ່ານ ບໍ່ສາມາດເຂົ້າຮ່ວມກອງປະຊຸມຄື: ທ່ານນາງ ລັດດາວັນ ຊິງວິໄລ), ມີຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມເປັນຜູ້ສັງເກດການ.

ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:

1) ຮັບຊາບລາຍງານ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຄວາມສ່ຽງ ແລະ ວຽກງານບາເຊ ii;
2) ຮັບຮອງເອົາລາຍງານການປະເມີນຄວາມພຽງພໍຂອງທຶນພາຍໃນ (ICAAP);
3) ຮັບຮອງບາງບັນຫາ ກ່ຽວກັບ ນະໂຍບາຍຄຸ້ມຄອງສິນເຊື່ອ ທຄຕລ;
4) ຮັບຮອງການສະເໜີຂໍກູ້ຢືມເງິນຂອງລູກຄ້າບໍລິສັດຈຳນວນ 1 ລາຍການ ທີ່ຂຶ້ນກັບສິດຂອງສະພາບໍລິຫານ;
5) ຮັບຮອງການແຕ່ງຕັ້ງຄະນະກຳມະການປະເມີນມູນຄ່າຊັບສິນຂອງ ທຄຕລ.

ປະທານສະພາບໍລິຫານ

ສຸລິວັດ ສຸວັນນະຈຸມຄຳ